ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

**ສຳນັກງານນາຍົກລັດຖະມົນຕີ** — ເລກທີ 348 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 01.10.2007.

# ດຳລັດ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງປ້ອງກັນປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ ປີ 2003,
- ອີງຕາມ ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ສະບັບເລກທີ່07/ສພຊ, ລົງວັນທີ 22 ຕຸລາ 2004;
- ອີງຕາມ ການສະເໜີຂອງທ່ານລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ສະບັບເລກທີ 2168/ ກປທ, ລົງວັນທີ 21 ກັນຍາ 2007;
- ອີງຕາມ ການສະເໜີຂອງທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 87/ ທປຄ, ລົງວັນທີ 25 ກັນຍາ 2007.

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ**
**ອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ການພົວພັນ ແລະ ແບບແຜນວິທີເຮັດວຽກຂອງກະຊວງປ້ອງກັນປະເທດ. ເພື່ອຍົກສູງຄວາມຮັບຜິດຊອບ, ຮັບປະກັນປະສິດທິພາບ ແລະ ປະສິດທິຜົນໃນການກໍ່ສ້າງ ຄຸ້ມຄອງບັນຊາກອງທັບ.

## ໝວດທີ II
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 2. ທີ່ຕັ້ງ.**

ກະຊວງປ້ອງກັນປະເທດ ແມ່ນອົງການຈັດຕັ້ງຄຸ້ມຄອງລັດຂັ້ນສູນກາງ, ສັງກັດຢູ່ໃນໂຄງປະກອບກົງຈັກ ຂອງລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 3. ພາລະບົດບາດ.**

ເປັນເສນາທິການໃຫ້ສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານປ້ອງກັນຊາດ. ເປັນໃຈກາງໃນການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດທົ່ວປວງຊົນຮອບດ້ານ ຂອງພັກ. ສຶກສາອົບຮົມ, ກໍ່ສ້າງ ແລະ ຄຸ້ມຄອງບັນຊາກຳລັງປະກອບອາວຸດທັງສາມປະເພດກຳລັງ. ເປັນຕົວແທນໃຫ້ລັດຖະບານໃນການພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານປ້ອງກັນຊາດ.

## ໝວດທີ III
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4. ໜ້າທີ່:**

1. ຫັນແນວທາງປ້ອງກັນຊາດທົ່ວປວງຊົນຮອບດ້ານຂອງພັກໃຫ້ກາຍເປັນກົດໝາຍ, ດຳລັດ ແລະ ກົດລະບຽບ ຂອງກະຊວງປ້ອງກັນປະເທດ ໃນການເຄື່ອນໄຫວ ກໍ່ສ້າງ ແລະ ຄຸ້ມຄອງກອງທັບ;
2. ກຳນົດທິດທາງ ແລະ ສ້າງແຜນຍຸດທະສາດໃນການຈັດຕັ້ງປະຕິບັດໜ້າທີ່ປົກປັກຮັກສາປະເທດຊາດ, ຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ຮັບປະກັນສະເຖຍລະພາບ ແລະ ຄວາມໝັ້ນຄົງ ຂອງລະບອບປະຊາທິປະໄຕປະຊາຊົນ;
3. ຕິດຕາມ, ຄົ້ນຄວ້າ, ກຳແໜ້ນກົນອຸບາຍ, ລຸ່ງມລາຍ ແລະ ການເຄື່ອນໄຫວຂອງອິດທິກຳລັງທີ່ເປັນປໍລະປັກ ເພື່ອມີມາດຕາການຕອບໂຕ້ຢ່າງເດັດຂາດ ແລະ ທັນການ;
4. ກໍ່ສ້າງ ແລະ ປັບປຸງ ກອງທັບປະຊາຊົນລາວ ໃຫ້ເປັນກອງທັບປະຕິວັດ ທີ່ມີລະບຽບແບບແຜນ ແລະ ທັນສະໄໝ;
5. ກໍ່ສ້າງ ແລະ ປັບປຸງກຳລັງໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງດ້ານການຈັດຕັ້ງ, ມີລະບຽບແບບແຜນ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ, ມີນ້ຳໃຈກຽມພ້ອມສູ້ລົບ ແລະ ສູ້ລົບມີໄຊ;
6. ສ້າງແຜນກຳນົດວຽກງານພາລາທິການທົ່ວກອງທັບ ແຕ່ລະໄລຍະ, ເພື່ອຮັບປະກັນພະລາທິການຕາມລະບອບອັດຕາໃຫ້ຄົບຖ້ວນ ທັນເວລາ. ຕັ້ງໜ້າສ້າງພາລາທິການກັບທີ່ເພື່ອແກ້ໄຂຊີວິດການເປັນຢູ່. ຄຸ້ມຄອງ, ນຳໃຊ້ງົບປະມານຂອງກອງທັບ ໃຫ້ມີສິດທິຜົນສູງ;
7. ສ້າງພື້ນຖານວັດຖຸເຕັກນິກ, ປົກປັກຮັກສາ, ບົວລະບັດສ້ອມແປງ, ຄຸ້ມຄອງນຳໃຊ້ພາຫານະເຕັກນິກ, ອາວຸດຍຸດໂທປະກອນໃຫ້ຖືກຕ້ອງຕາມເຕັກນິກ ແລະ ລະບຽບການ;
8. ຄົ້ນຄວ້າ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມເຂົ້າໃນວຽກງານປ້ອງກັນຊາດ ໃຫ້ກວ້າງຂວາງ;

9. ປະຕິບັດ 3 ໜ້າທີ່ 4 ການພົວພັນຂອງກອງທັບປະຊາຊົນລາວ;

10. ປະສານສົມທົບກັບບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນໃນການກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ. ສ້າງທ່າສະໜາມປະຊາຊົນສາມຂັ້ນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຊ່ວຍເຫຼືອປະຊາຊົນຈາກໄພພິບັດ;

11. ປະຕິບັດແນວທາງການຕ່າງປະເທດ ຂອງພັກ ແລະ ລັດ , ພົວພັນ ແລະ ຮ່ວມມືດ້ານການທະຫານກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ພົວພັນມິດຕະພາບ ກັບບັນດາກອງທັບປະເທດຕ່າງໆໃນໂລກ ຕາມການຕົກລົງຂອງລັດຖະບານ;

12. ສະຫລຸບ, ສະພາບການຮອບດ້ານ ກ່ຽວກັບວຽກງານປ້ອງກັນຊາດ ເພື່ອລາຍງານໃຫ້ສູນກາງພັກ ແລະ ລັດຖະບານເປັນປົກກະຕິ;

13. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 5. ຂອບເຂດສິດ**

1. ສະເໜີປັບປຸງ ຫລື ສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດກ່ຽວກັບວຽກງານປ້ອງກັນຊາດ ເພື່ອສະເໜີຕໍ່ລັດຖະບານ ແລະ ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ກົດລະບຽບຕ່າງໆຂອງກອງທັບ;
2. ສະເໜີລັດຖະບານສ້າງຕັ້ງ ຫຼື ຍຸບເລີກການຈັດຕັ້ງຂັ້ນບັນດາກົມໃຫຍ່, ວິທະຍາຄານ, ຫ້ອງວ່າການ, ເຂດທະຫານ, ກົມວິທະຍາສາດ-ປະຫວັດສາດການທະຫານ, ກອງພົນ, ກອງບັນຊາການທະຫານນະຄອນຫລວງວຽງຈັນ, ນະຄອນ, ແຂວງ ແລະ ທຽບເທົ່າ;
3. ສະເໜີນາຍົກລັດຖະມົນຕີ ພິຈາລະນາກ່ຽວກັບການປະດັບຊັ້ນ, ເລື່ອນຊັ້ນ ແລະ ປົດຊັ້ນ-ຂັ້ນນາຍພົນຕາມລັດຖະທຳມະນູນ ໝວດທີ່ VIII ມາດຕາ 73 ແລະ ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ມາດຕາ 16 ຂໍ້ 1;
4. ສະເໜີນາຍົກລັດຖະມົນຕີເປັນຜູ້ຕົກລົງ, ປະດັບຊັ້ນ, ທຽບຊັ້ນ, ປົດຊັ້ນ, ເລື່ອນຊັ້ນ ແລະ ປະຕິບັດວິໄນນາຍທະຫານ ຂັ້ນພັນເອກ ຕາມກົດໝາຍວ່າດ້ວຍນາຍທະຫານ ກອງທັບປະຊາຊົນລາວ ໝວດທີ່ III ມາດຕາ 16 ຂໍ້ 2;
5. ສະເໜີແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງນາຍທະຫານ ຕາມກົດໝາຍນາຍທະຫານ ໝວດ IV ມາດຕາ 21 ຂໍ້ 2;
6. ສະເໜີລັດຖະບານ ແລະ ທ່ານປະທານປະເທດ ປະກາດໃຊ້ພາວະສຸກເສີນໃນກໍລະນີຈຳເປັນ ທີ່ເປັນອັນຕະລາຍຕໍ່ຄວາມໝັ້ນຄົງ ຂອງຊາດ;
7. ສະເໜີໃຫ້ສູນກາງພັກ ແລະ ລັດຖະບານ ມີຄຳສັ່ງໃຫ້ບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນດັດແປງ ຫຼື ຍຸດຕິທຸກການເຄື່ອນໄຫວທີ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ;
8. ສົມທົບກັບກະຊວງປ້ອງກັນຄວາມສະຫງົບອອກຄຳສັ່ງ ແລະ ນຳໃຊ້ກຳລັງເຂົ້າແກ້ໄຂສະພາບການໃນກໍລະນີສຸກເສີນ ແຕ່ຕ້ອງມີຄວາມຮັບຜິດຊອບຕໍ່ສູນກາງພັກ ແລະ ລັດຖະບານ;
9. ກຳນົດພື້ນທີ່ຍຸດທະສາດການທະຫານ, ເຂດຕັ້ງທັບຂອງກົມກອງທະຫານ, ເຂດອຸດສະຫະກຳປ້ອງກັນຊາດ, ເຂດການຜະລິດຂອງທະຫານ ເພື່ອນຳສະເໜີຕໍ່ສູນກາງພັກ ແລະ ລັດຖະບານ ຕົກລົງອະນຸມັດ;

10. ພົວພັນ, ເຈລະຈາ, ເຊັນ ແລະ ລົບລ້າງສັນຍາ, ອະນຸສັນຍາ, ຂໍ້ຜູກພັນກັບຕ່າງປະເທດ, ກັບອົງການຈັດຕັ້ງສາກົນ ແລະ ເຂົ້າຮ່ວມການ ເຄື່ອນໄຫວໃນເວທີສາກົນກ່ຽວກັບວຽກງານປ້ອງກັນຊາດ;
11. ສະເໜີສ້າງຕັ້ງ ຫຼື ຍຸບເລີກຫ້ອງການທູດທະຫານປະຈໍາຢູ່ບັນດາປະເທດຕ່າງໆ ທີ່ເຫັນວ່າມີຄວາມຈໍາເປັນ;
12. ອະນຸມັດສ້າງຕັ້ງ ຫລື ຍຸບເລີກໂຮງງານອຸດສະຫະກໍາ ປ້ອງກັນຊາດ ເພື່ອຜະລິດຮັບໃຊ້ພາຍໃນກອງທັບ ແລະ ສັງຄົມ;
13. ຂຶ້ນແຜນງົບປະມານສໍາລັບຂົງເຂດວຽກງານປ້ອງກັນຊາດ ເພື່ອສະເໜີຕໍ່ລັດຖະບານອະນຸມັດ;
14. ສ້າງຕັ້ງ ຫຼື ຍົກເລີກຫົວໜ່ວຍການຈັດຕັ້ງຂັ້ນກົມນ້ອຍ, ກອງພັນໃຫຍ່ ແລະ ທຽບເທົ່າລົງມາ;
15. ປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ, ປົດຊັ້ນ, ນາຍທະຫານຕາມໝວດ III ມາດຕາ 16 ຂໍ້ 3 ແລະ ຂໍ້ 4 ຂອງກົດໝາຍວ່າດ້ວຍ ນາຍທະຫານ;
16. ແຕ່ງຕັ້ງ, ຍົກຍ້າຍ, ເລື່ອນ ແລະ ປົດຕໍາແໜ່ງ ນາຍທະຫານຕາມ ໝວດ IV ມາດຕາ 21 ຂໍ້ 3 ຂອງ ກົດໝາຍວ່າດ້ວຍນາຍທະຫານ;
17. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງສູນກາງພັກ ແລະ ລັດຖະບານ.

## ໝວດທີ IV
## ໂຄງປະກອບການຈັດຕັ້ງ

**ມາດຕາ 6. ໂຄງປະກອບກົງຈັກ:**

1. ກົມໃຫຍ່ເສນາທິການກອງທັບ
2. ກົມໃຫຍ່ການເມືອງກອງທັບ.
3. ກົມໃຫຍ່ພະລາທິການກອງທັບ.
4. ກົມໃຫຍ່ເຕັກນິກກອງທັບ.
5. ຫ້ອງວ່າການກະຊວງ
6. ກົມວິທະຍາສາດ-ປະຫວັດສາດການທະຫານ
7. ບັນດາວິທະຍາຄານ.
8. ກອງບັນຊາການເຂດທະຫານ.
9. ກອງບັນຊາການທະຫານນະຄອນຫລວງວຽງຈັນ, ນະຄອນ, ແຂວງ, ກອງພົນ, ກອງພັນໃຫຍ່ ແລະ ທຽບເທົ່າ.
10. ບັນດາໂຮງຮຽນ, ໂຮງໝໍ, ໂຮງງານ, ສາງຄັງ ແລະ ທຽບເທົ່າ.

**ມາດຕາ 7. ໂຄງປະກອບບຸກຄະລະກອນ:**

1. ມີລັດຖະມົນຕີວ່າການ 1 ທ່ານ, ເປັນສະມາຊິກລັດຖະບານ ຊຶ່ງແຕ່ງຕັ້ງ ແລະ ປົດຕໍາແໜ່ງຈາກປະທານປະເທດ, ຕາມການສະເໜີ ຂອງນາຍົກລັດຖະມົນຕີ ແລະ ຮັບຮອງເອົາຈາກສະພາແຫ່ງຊາດ, ມີຄວາມຮັບຜິດຊອບ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ ວ່າ

ດ້ວຍ ລັດຖະບານ ແຫ່ງ ສປປ ລາວ ແລະ ມີຄວາມຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນຂະແໜງການຂອງຕົນ. ໃນກໍລະນີລັດຖະມົນຕີວ່າການ ໄປເຄື່ອນໄຫວທາງໄກ ຫຼື ຕິດຂັດວຽກງານ, ລັດຖະມົນຕີວ່າການ ຈະຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ລັດຖະມົນຕີຊ່ວຍ ທ່ານໃດທ່ານໜຶ່ງເປັນຜູ້ຮັກສາການແທນ;

2. ມີລັດຖະມົນຕີຊ່ວຍວ່າການ ຈໍານວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕໍາແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີວ່າການກະຊວງ ລັດຖະມົນຕີຊ່ວຍວ່າການ ເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການ ໃນການຊີ້ນໍາ-ນໍາພາ, ອໍານວຍຄວບຄຸມວຽກງານລວມ ຂອງກະຊວງ ແລະ ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍ ຂອງລັດຖະມົນຕີວ່າການກະຊວງ.
3. ມີບັນດາຫົວໜ້າ, ຮອງຫົວໜ້າກົມໃຫຍ່, ມີຫົວໜ້າ, ຮອງຫົວໜ້າຫ້ອງວ່າການກະຊວງ ແລະ ມີຫົວໜ້າ, ຮອງຫົວໜ້າກົມວິທະຍາສາດ-ປະຫວັດສາດການທະຫານ.
4. ຢູ່ບັນດາວິທະຍາຄານ, ເຂດທະຫານ, ກອງພົນ, ທະຫານນະຄອນຫລວງ, ນະຄອນ, ແຂວງ, ບັນດາໂຮງຮຽນ ແລະ ທຽບເທົ່າ ແຕ່ລະການຈັດຕັ້ງມີ 2 ຫົວໜ້າ ແລະ ມີຮອງ ຈໍານວນໜຶ່ງ. ນອກຈາກນີ້ຍັງມີນາຍ ແລະ ພົນທະຫານ, ມີກໍາມະກອນ ແລະ ພາລະກອນປ້ອງກັນຊາດ ທີ່ສັງກັດຢູ່ໂຄງປະກອບກົງຈັກການຈັດຕັ້ງຂອງຕົນ.

## ໝວດທີ V
## ການພົວພັນ.

**ມາດຕາ 8. ການພົວພັນ**

1. ກະຊວງປ້ອງກັນປະເທດ ຢູ່ພາຍໃຕ້ການຊີ້ນໍາ, ນໍາພາຂອງຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສູນກາງ ບົນພື້ນຖານຫລັກການພັກນໍາພາກອງທັບໂດຍກົງ, ເດັດຂາດ, ລວມສູນເປັນເອກະພາບ ແລະ ຮອບດ້ານ.
2. ພົວພັນກັບຫ້ອງວ່າການສູນກາງພັກ ກ່ຽວກັບການນໍາພາຂອງພັກ ຕໍ່ກອງທັບ.
3. ພົວພັນກັບສະພາແຫ່ງຊາດ ໃນການປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ບັນຫາອື່ນໆ ທີ່ພົວພັນກັບວຽກງານປ້ອງກັນຊາດ.
4. ພົວພັນກັບສໍານັກງານປະທານປະເທດ ໃນການປະຕິບັດລັດຖະດໍາລັດຕ່າງໆ ກ່ຽວກັບກັບວຽກງານປ້ອງກັນຊາດ
5. ພົວພັນກັບສໍານັກງານນາຍົກລັດຖະມົນຕີ ເພື່ອລາຍງານສະພາບການເຄື່ອນໄຫວ ແລະ ຂໍທິດຊີ້ນໍາກ່ຽວກັບວຽກງານປ້ອງກັນຊາດ.
6. ພົວພັນປະສານສົມທົບກັບບັນດາກະຊວງ, ອົງການຈັດຕັ້ງຂອງລັດ ແລະ ສັງຄົມເພື່ອຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ ທົ່ວປວງຊົນຮອບດ້ານ ຂອງພັກ.

## ໝວດທີ VI
## ລະບອບແບບແຜນວິທີເຮັດວຽກ.

**ມາດຕາ 9. ແບບແຜນວິທີເຮັດວຽກ**

1. ປະຕິບັດຫລັກການ ເຮັດວຽກງານ ແບບລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບຢ່າງເຂັ້ມງວດ.
2. ເຮັດວຽກມີແຜນການ, ໂຄງການ, ມີການຈັດຕັ້ງປະຕິບັດ, ມີການປະສານ, ມີການກວດກາ, ແທດເຖິງຕົວຈິງ. ມີການສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນເປັນປົກກະຕິ.
3. ເຮັດວຽກມີເນື້ອໃນ, ຄາດໝາຍ ແລະ ກຳນົດເວລາ, ມີການແບ່ງຂັ້ນຄຸ້ມຄອງ, ມອບສິດໃຫ້ບຸກຄົນຮັບຜິດຊອບ ຕິດພັນກັບນະໂຍບາຍ, ເສີມຂະຫຍາຍຫົວຄິດປະດິດສ້າງ, ຍົກສູງຄວາມຮັບຜິດຊອບ ແລະ ເປັນເຈົ້າຕົນເອງ.
4. ປະຕິບັດລະບອບປະຊຸມ, ສ່ອງແສງປະຈຳອາທິດ, ປະຈຳເດືອນ, ໄຕມາດ ແລະ ປະຈຳປີ. ລາຍງານ, ຂໍຄຳເຫັນສູນກາງພັກ ແລະ ລັດຖະບານ.

## ໝວດທີ VII
## ບົດບັນຍັດສຸດທ້າຍ.

**ມາດຕາ 10. ກາປະທັບ ແລະ ເຄື່ອງໝາຍ.**

ກະຊວງປ້ອງກັນປະເທດ ມີກາປະທັບ, ເຄື່ອງໝາຍ ສັນຍາລັກສະເພາະຂອງຕົນ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 11. ງົບປະມານ.**

ກະຊວງປ້ອງກັນປະເທດ ມີງົບປະມານສະເພາະ ເພື່ອຮັບໃຊ້ວຽກງານທາງລັດຖະການ ແລະ ເປັນຫົວໜ່ວຍງົບປະມານຂັ້ນໜຶ່ງຕາມກົດໝາຍວ່າດ້ວຍງົບປະມານກຳນົດ

**ມາດຕາ 12. ການຜັນຂະຫຍາຍ.**

1. ນາຍົກລັດຖະມົນຕີເປັນຜູ້ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາກົມໃຫຍ່, ຫ້ອງວ່າການກະຊວງ, ບັນດາວິທະຍາຄານ, ກົມວິທະຍາສາດ-ປະຫວັດສາດການທະຫານ, ເຂດທະຫານ, ທະຫານນະຄອນຫຼວງວຽງຈັນ, ນະຄອນ, ກອງພົນ, ແລະ ທະຫານແຂວງ.
2. ມອບໃຫ້ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເປັນຜູ້ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາກົມນ້ອຍ, ຫ້ອງການ, ກອງພັນໃຫຍ່, ບັນດາໂຮງຮຽນ, ໂຮງໝໍ, ໂຮງງານ, ສາງຄັງ ແລະ ຫຼຸບເທົ່າໃຫ້ລະອຽດ.

**ມາດຕາ 13. ການຈັດຕັ້ງປະຕິບັດ.**

ບັນດາການຈັດຕັ້ງຂອງພັກ-ລັດ, ກະຊວງປ້ອງກັນປະເທດ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 14. ຜົນສັກສິດ.**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາດຳລັດ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ທີ່ປະກາດໃຊ້ໃນເມື່ອກ່ອນຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ ແລະ ໃຫ້ໃຊ້ດຳລັດສະບັບນີ້ປ່ຽນແທນ.

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ.**

ບົວສອນ ບຸບຜາວັນ